ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ-19

ເລກທີ 1093 /ອຄ.ສພກ
ນະຄອນຫຼວງວຽງຈັນ, ວັນທີ 15 ພະຈິກ 2021

# ແຈ້ງການ

**ເຖິງ:** - ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ທ່ານຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ ໂຄວິດ-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການ ວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 1494/ຫສນຍ, ລົງວັນທີ 14 ພະຈິກ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ເຜີຍແຜ່ ແລະ ເພີ່ມທະວີການປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 1494/ຫສນຍ, ລົງວັນທີ 14 ພະຈິກ 2021 ແລະ ແຈ້ງການທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.

2. ອະນຸຍາດໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປີດດຳເນີນກິດຈະການໄດ້ປົກກະຕິ ແຕ່ຕ້ອງປະຕິບັດມາດຕະການທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ, ພະນັກງານ-ກຳມະກອນ ທີ່ມາເຮັດວຽກ ຕ້ອງໄດ້ຮັບວັກຊີນຄົບ ແລະ ບໍ່ມາຈາກເຂດແດງ ຫຼື ບໍ່ແມ່ນກຸ່ມສ່ຽງ.

3. ໂຮງງານ ຕ້ອງປະຕິບັດມາດຕະການທີ່ຄະນະສະເພາະກິດວາງອອກ ດັ່ງນີ້:

3.1 ສ້າງແຜນການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ ພ້ອມທັງປະຕິບັດໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

3.2 ໃຫ້ປະເມີນສະຖານທີ່ເຮັດວຽກໂຮງງານດ້ວຍຕົນເອງ ໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການລະບາດຂອງພະຍາດໂຄວິດ-19 ຕາມແຈ້ງການສະບັບເລກທີ 0975/ອຄ.ຄພກ, ລົງວັນທີ 18 ຕຸລາ 2021 ແລ້ວສົ່ງລາຍງານໃຫ້ຄະນະສະເພາະກິດຂັ້ນສູນກາງ ຫຼື ຂັ້ນແຂວງ, ນະຄອນຫຼວງວຽງຈັນ ເພື່ອຮັບຊາບ ແລະ ຕິດຕາມ;

3.3 ກວດວັດແທກອຸນຫະພູມ ເວລາເຂົ້າ-ອອກເຮັດວຽກ. ກໍລະນີພົບຜູ້ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປົວຂອງໂຮງງານ ຫຼື ມີຜູ້ຕິດເຊື້ອ ໃຫ້ແຈ້ງຄະນະສະເພາະກິດສາຍດ່ວນ 166, 165, 196 ແລະ ລາຍງານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເພື່ອດຳເນີນການກວດສອບ ແລະ ແນະນຳ;

3.4 ປະຕິບັດມາດຕະການຮັກສາໄລຍະຫ່າງ 1 ແມັດ ຂຶ້ນໄປ ເປັນຕົ້ນ ປະຕູທາງເຂົ້າ-ອອກ, ສະຖານທີ່ເຮັດວຽກ, ຫໍພັກ, ຫ້ອງອາຫານ ແລະ ຫ້ອງອາບນ້ຳ;

3.5 ໃສ່ຜ້າປິດປາກ-ດັງ;

3.6 ຈັດໃຫ້ມີນ້ຳດື່ມສະອາດ, ບ່ອນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມືໃຫ້ພຽງພໍ;

3.7 ອະນາໄມ, ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສຳຜັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

4. ຊຸກຍູ້ພະນັກງານ-ກຳມະກອນທຸກຄົນ ໃຫ້ໄດ້ຮັບວັກຊີນຄົບ.

5. ຫ້າມຈັດງານລ້ຽງສັງສັນ ຫຼື ກິດຈະກຳອື່ນ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ.

6. ຕິດຕັ້ງ ແລະ ລົງທະບຽນໂປຣແກຣມ Lao KYC ເພື່ອໃຊ້ບໍລິການ "ລາວ ສູ້ສູ້" ແລະ ຊຸກຍູ້ການສະໝັກລະຫັດວັກຊີນ (Vaccine ID) ເພື່ອໃຊ້ເປັນບັດຢັ້ງຢືນການສັກວັກຊີນ.

7. ສ້າງແຜນຮອງຮັບກໍລະນີມີຜູ້ຕິດເຊື້ອໃນໂຮງງານ ເຊິ່ງຕ້ອງມີສະຖານທີ່ປິ່ນປົວ, ສະຖານທີ່ສຳລັບຜູ້ສຳຜັດໃກ້ຊິດ ຢ່າງພຽງພໍ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໃນການກັກຕົວ ແລະ ປິ່ນປົວພະນັກງານ-ກຳມະກອນ;

8. ກໍລະນີ ເກີດມີການລະບາດຢູ່ພາຍໃນໂຮງງານ ຕ້ອງປິດການດຳເນີນກິດຈະການຊົ່ວຄາວ ເພື່ອອະນາໄມ, ຂ້າເຊື້ອ ແລະ ປະຕິບັດມາດຕະການກັ່ນກອງ, ຄັດແຍກກຸ່ມສ່ຽງຕາມທີ່ຄະນະສະເພາະກິດວາງອອກ ໃຫ້ມີຄວາມປອດໄພ ແລ້ວຈຶ່ງກັບມາເປີດດຳເນີນກິດຈະການໄດ້.

9. ກໍລະນີໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ລະເມີດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດວາງອອກ, ຕ້ອງຖືກດຳເນີນມາດຕະການຕ່າງໆ ຕາມກົດໝາຍ ແລະ ລະບຽບການ.

10. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້.

11. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ແລ້ວສົ່ງມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ (ຜ່ານເບີວ໊ອດແອັບ: 020 9222 1234) ທຸກໆ ວັນຈັນຂອງແຕ່ລະອາທິດ ເພື່ອສືບຕໍ່ລາຍງານກະຊວງ ແລະ ລັດຖະບານໃຫ້ທັນເວລາ.

12. ແຈ້ງການສະບັບນີ້ປ່ຽນແທນແຈ້ງການ ສະບັບເລກທີ 0913/ອຄ.ຄພກ, ລົງວັນທີ 01 ຕຸລາ 2021 ແລະ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດ**

**ສົມຈິດ ອິນທະມິດ**